**Seattle**
Office of Sustainability
& Environment

## ສະໝັກເຂົ້າຮ່ວມກອງທຶນຄວາມຍຸຕິທຳດ້ານສິ່ງແວດລ້ອມຂອງເມືອງ Seattle

ຫ້ອງການຄວາມຍືນຍົງ ແລະ ສິ່ງແວດລ້ອມຂອງ Seattle (OSE) ມີຄວາມຕື່ນເຕັ້ນທີ່ຈະປະກາດວ່າ ກອງທຶນຄວາມຍຸຕິທຳດ້ານສິ່ງແວດລ້ອມ (Environmental Justice Fund)ກຳລັງ **ເປີດຮັບໃບສະໝັກ.**
ໃນປີນີ້ມີການສະໜອງທຶນແບບທາງເລືອກເປັນສອງທາງ. ທາງເລືອກທຳອິດສະເໜີໃຫ້ຄວາມຊ່ວຍເຫຼືອຕັ້ງແຕ່ 10,000 ໂດລາ ເຖິງ 40,000 ໂດລາ ໂດຍມີຈຳນວນເງິນທຶນລວມທັງໝົດ 250,000 ໂດລາ. ທາງເລືອກທີສອງສະເໜີໃຫ້ຄວາມຊ່ວຍເຫຼືອລ້າຕັ້ງແຕ່ 40,001 ໂດລາ ເຖິງ 90,000 ໂດລາ ໂດຍມີຈຳນວນເງິນທຶນລວມທັງໝົດ 750,000 ໂດລາ.
ເງິນທຶນເຫຼົ່ານີ້ແມ່ນເພື່ອສະໜັບສະໜູນໂຄງການທີ່ໃຫ້ຜົນປະໂຫຍດແກ່ຊຸມຊົນທີ່ໄດ້ຮັບຜົນກະທົບຈາກຄວາມບໍ່ສະເໝີພາບດ້ານສິ່ງແວດລ້ອມ ແລະ ສະພາບອາກາດ, ລວມທັງຄົນຜິວດຳ, ຄົນພື້ນເມືອງ, ຄົນຜິວສີ, ຄົນອົບພະຍົບ, ຜູ້ລີ້ໄພ, ບຸຄົນທີ່ມີລາຍໄດ້ຕໍ່າ, ເຍົາວະຊົນ ແລະ ຄົນສູງໄວ. ກຳນົດ **ວັນສຸດທ້າຍໃນການສົ່ງໃບສະໝັກແມ່ນວັນພຸດທີ 26 ເດືອນກໍລະກົດ ເວລາ 5 ໂມງແລງ (ເວລາປາຊີຟິກ).**

ໂອກາດໃນການສະໜອງເງິນທຶນນີ້ແມ່ນເປີດໃຫ້ຊົນເຜົ່າ ແລະ ອົງການດ້ານຊົນເຜົ່າ, ອົງການທີ່ບໍ່ມຸ່ງຜົນກຳໄລ ແລະ ກຸ່ມຊຸມຊົນທີ່ເຮັດວຽກກັບຊຸມຊົນຂອງເຂົາເຈົ້າເພື່ອກ້າວໄປສູ່ຄວາມຍຸຕິທຳດ້ານສິ່ງແວດລ້ອມ ແລະ ສະພາບອາກາດ. ປະເພດຂອງໂຄງການທີ່ມີສິດລວມເຖິງແຕ່ບໍ່ຈຳກັດພຽງໂຄງການສິລະປະ ແລະ ການເລົ່າເລື່ອງ, ການສຶກສາໃນຊຸມຊົນ, ການສ້າງຂີດຄວາມສາມາດຂອງອົງກອນ ແລະ ຊຸມຊົນ,
ການກຽມຄວາມພ້ອມສຳລັບການປ່ຽນແປງສະພາບດິນຟ້າອາກາດ, ການສ້າງທັກສະ ແລະ
ການຝຶກອົບຮົມທີ່ກ່ຽວຂ້ອງກັບວຽກສີຂຽວ* ແລະ ການວາງແຜນຊຸມຊົນ ແລະ ວິໄສທັດ.

ຖ້າທ່ານສົນໃຈທີ່ຈະຮຽນຮູ້ເພີ່ມເຕີມກ່ຽວກັບກອງທຶນນີ້, ການປຶກສາຫາລືແນວຄວາມຄິດກ່ຽວກັບໂຄງການ ຫຼື ການຍື່ນບົດສະເໜີ ທ່ານສາມາດດຳເນີນການດັ່ງຕໍ່ໄປນີ້:

- ລົງທະບຽນ **ທີ່ນີ້** ເພື່ອເວົ້າລົມເປັນເວລາ 20 ນາທີກັບສະມາຊິກໃນທີມງານຂອງພວກເຮົາ
  - *ກະລຸນາໃຊ້ແບບຟອມເພື່ອຮ້ອງຂໍຄວາມຊ່ວຍເຫຼືອດ້ານການແປພາສາ.*

- ເຂົ້າຮ່ວມກອງປະຊຸມໃຫ້ຂໍ້ມູນຂ່າວສານທາງອອນລາຍ:
  - ວັນພຸດທີ 21 ເດືອນມິຖຸນາ, ເວລາ 12-1:30 ໂມງບ່າຍ - ລົງທະບຽນທີ່ນີ້
  - *ກະລຸນາສົ່ງອີເມວຫາພວກເຮົາທີ່ equityenviro@seattle.gov ເພື່ອຮ້ອງຂໍນາຍພາສາລ່ວງໜ້າ.*

- ເຂົ້າຮ່ວມກອງປະຊຸມໃຫ້ຂໍ້ມູນຂ່າວສານດ້ວຍຕົນເອງ:
  - ວັນອັງຄານທີ 27 ເດືອນມິຖຸນາ ເວລາ 6-7:30 ໂມງແລງ - ລົງທະບຽນທີ່ນີ້
  - **ສະຖານທີ່:** ຫ້ອງສະໝຸດ Columbia City Public Library), ຫ້ອງປະຊຸມ Columbia Meeting Room
    - 4721 Rainier Ave S, Seattle, WA 98118
  - *ກະລຸນາສົ່ງອີເມວຫາພວກເຮົາທີ່ equityenviro@seattle.gov ເພື່ອຮ້ອງຂໍນາຍພາສາລ່ວງໜ້າ.*

ພວກເຮົາພ້ອມຕອບຄຳຖາມຜ່ານທາງອີເມວເຊັ່ນກັນທີ່ equityenviro@seattle.gov. ໄປທີ່ **seattle.gov/environment/ejfund** ເພື່ອຮຽນຮູ້ເພີ່ມເຕີມ ແລະ ສະໝັກເຂົ້າຮ່ວມ.

* ສຳລັບຈຸດປະສົງຂອງກອງທຶນ EJ Fund,
ອົງການສີຂຽວແມ່ນມີຄວາມໝາຍວ່າເປັນອົງກທີ່ມີຈຸດປະສົງເພື່ອແກ້ໄຂບັນຫາ ຫຼື ຫຼຸດຜ່ອນຜົນກະທົບຂອງການປ່ຽນແປງສະພາບດິນຟ້າອາກາດ.